ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ ເລກທີ 0760/ກຜທ

ນະຄອນຫລວງວຽງຈັນ, ວັນທີ 08 ເມສາ 2022

# ຂໍ້ຕົກລົງ
# ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ
# ກົມສະຖິຕິເສດຖະກິດ.

- ອີງຕາມ ກົດໝາຍວ່າດ້ວຍສະຖິຕິ (ສະບັບປັບປຸງ) ສະບັບເລກທີ 24/ສພຊ, ລົງວັນທີ 11 ພຶດສະພາ 2017;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວ ຂອງກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 636/ນຍ, ລົງວັນທີ 26 ພະຈິກ 2021;
- ອີງຕາມ ດຳລັດ ຂອງ ນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ສູນສະຖິຕິແຫ່ງຊາດ, ສະບັບເລກທີ 682/ນຍ, ລົງວັນທີ 24 ທັນວາ 2021;
- ອີງຕາມ ໜັງສືສະເໜີ ຂອງສູນສະຖິຕິແຫ່ງຊາດ ສະບັບເລກທີ 13/ກຜທ.ສຖຕ1, ວັນທີ 28/01/2022;
- ອີງຕາມ ໜັງສືສະເໜີ ຂອງ ກົມຈັດຕັ້ງ ແລະ ພະນັກງານ ສະບັບເລກທີ 250/ກຈພ.2, ວັນທີ 17 ມີນາ 2022.

## ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງ **ກົມສະຖິຕິເສດຖະກິດ**, **ສູນສະຖິຕິແຫ່ງຊາດ** ແນໃສ່ການຈັດຕັ້ງປະຕິບັດວຽກງານ ໃຫ້ມີຄວາມຄ່ອງຕົວ, ມີປະສິດທິພາບແລະ ປະສິດທິຜົນສູງ.

### ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ

ກົມສະຖິຕິເສດຖະກິດ, ສູນສະຖິຕິແຫ່ງຊາດ ມີຊື່ຫຍໍ້ເປັນຕົວອັກສອນວ່າ "ກສກ" ຂຽນເປັນພາສາອັງກິດ **Department of Economic Statistics** ມີຊື່ຫຍໍ້ເປັນຕົວອັກສອນວ່າ **"DES"**, ແມ່ນການຈັດຕັ້ງໜຶ່ງໃນໂຄງປະກອບກົງຈັກຂອງ ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ. ມີ

ພາລະບົດບາດເປັນເສນາທິການໃຫ້ແກ່ ຄະນະນຳຂອງສູນສະຖິຕິແຫ່ງຊາດ, ກະຊວງ ແຜນການ ແລະ ການລົງທຶນ ໃນວຽກງານສະຖິຕິເສດຖະກິດ, ເປັນສູນກາງປະສານງານໃນການຈັດຕັ້ງປະຕິບັດວຽກງານວິຊາການດ້ານສະຖິຕິເສດຖະກິດ ຕາມຫຼັກວິທະຍາສາດສະຖິຕິ ແລະ ຕາມຫຼັກການພື້ນຖານ ກ່ຽວກັບ ວຽກງານສະຖິຕິ ທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍສະຖິຕິ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

ມາດຕາ 3. ໜ້າທີ່

1. ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍ, ມະຕິສະພາແຫ່ງຊາດ, ລັດຖະບັນຍັດ ແລະ ລັດຖະດຳລັດຂອງປະທານປະເທດ, ມະຕິຕົກລົງຂອງລັດຖະບານ, ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ ແລະ ລະບຽບການຂອງລັດ, ແຜນການ, ແຜນດຳເນີນງານ ແລະ ໂຄງການລະອຽດ ດ້ານສະຖິຕິເສດຖະກິດໃນແຕ່ລະໄລຍະ;
2. ສ້າງນິຕິກຳ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານການຜະລິດ, ການເຜີຍແຜ່ ແລະ ລາຍງານຂໍ້ມູນສະຖິຕິທາງການດ້ານເສດຖະກິດ;
3. ສ້າງແຜນງານ ແລະ ຈັດຕັ້ງປະຕິບັດ ກິດຈະກຳກ່ຽວກັບການຜະລິດຂໍ້ມູນສະຖິຕິເສດຖະກິດ ແລະ ເປັນໃຈກາງໃນການຈັດຕັ້ງປະຕິບັດການສຳຫຼວດໃຫຍ່, ການສຳຫລວດຕົວແທນ ແລະ ການສຳຫຼວດສະເພາະອື່ນໆ ດ້ານສະຖິຕິເສດຖະກິດ;
4. ພັດທະນາ ແລະ ກຳນົດຕົວຊີ້ບອກທາງດ້ານເສດຖະກິດ ໃນລະດັບຊາດ, ຂະແໜງການ ແລະ ທ້ອງຖິ່ນ ພ້ອມທັງສ້າງສຳນວນ ແລະ ສຳເນົາ ຂໍ້ມູນສະຖິຕິດັ່ງກ່າວ ໃນແຕ່ລະໄລຍະ;
5. ສ້າງ ແລະ ພັດທະນາ ເຄື່ອງມື, ຄູ່ມື, ລະບອບວິທີການເກັບກຳ, ສັງລວມ, ຄິດໄລ່, ລະບົບລະຫັດສາລະບານ, ຖານຂໍ້ມູນ ເພື່ອຜະລິດຕົວຊີ້ບອກ ແລະ ຂໍ້ມູນສະຖິຕິເສດຖະກິດໄປຕາມຫຼັກການສາກົນ;
6. ອອກແບບການສຳຫຼວດ ແລະ ການເກັບກຳຂໍ້ມູນທາງດ້ານວຽກງານສະຖິຕິເສດຖະກິດ;
7. ສັງລວມ, ຄົ້ນຄວ້າ ແລະ ວິໄຈຂໍ້ມູນ ສະຖິຕິການບັນຊີແຫ່ງຊາດ, ລວມຍອດຜະລິດຕະພັນພາຍໃນ, ລວມຍອດລາຍໄດ້ແຫ່ງຊາດ, ດັດຊະນີລາຄາ ແລະ ອັດຕາເງິນເຟີ້, ດັດຊະນີການນຳເຂົ້າ-ສົ່ງອອກ, ດັດຊະນີການລົງທຶນ, ດັດຊະນີການຜະລິດ ແລະ ຕົວຊີ້ບອກສະຖິຕິດ້ານເສດຖະກິດອື່ນໆ;
8. ຄົ້ນຄວ້າ, ເກັບກຳ, ສັງລວມ, ຄິດໄລ່ ແລະ ລາຍງານຂໍ້ມູນດ້ານສະຖິຕິສະຖິຕິເສດຖະກິດ, ຂໍ້ມູນສະຖິຕິການຄ້າ ແລະ ການລົງທຶນ ຈາກລະບົບການລາຍງານບໍລິຫານຂອງບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງລະບົບການຈົດທະບຽນ, ການສຳຫຼວດໃຫຍ່, ການສຳຫຼວດຕົວແທນ ແລະ ການສຳຫຼວດສະເພາະອື່ນໆ ໃນແຕ່ລະໄລຍະ;
9. ສ້າງສຳນວນ-ສຳເນົາ ຂໍ້ມູນຂອງການສຳຫຼວດໃຫຍ່, ສຳຫຼວດຕົວແທນ, ສຳຫຼວດສະເພາະ ແລະ ລະບົບລາຍງານບໍລິຫານ, ຕົວຊີ້ບອກດ້ານເສດຖະກິດຕາມຫລັກການວິທີວິທະຍາສະຖິຕິ;
10. ປະສານສົມທົບ, ເກັບກຳສັງລວມຂໍ້ມູນ, ສ້າງ ແລະ ເຊື່ອມໂຍງລະບົບຖານຂໍ້ມູນສະຖິຕິຂະແໜງການ ແລະ ທ້ອງຖິ່ນ ຈາກການລາຍງານ, ລະບົບທະບຽນ ແລະ ການສຳຫຼວດ ເພື່ອຜະລິດຕົວຊີ້ບອກ ແລະ

ສະຖິຕິທະບຽນທຸລະກິດ, ສະຖິຕິການຄ້າຕ່າງປະເທດ, ສະຖິຕິການລົງທຶນ ແລະ ສັງລວມສະຖິຕິເສດຖະກິດອື່ນໆ ທີ່ກ່ຽວຂ້ອງ;

11. ຕິດຕາມປະເມີນ ແລະ ຄາດຄະເນທ່າອ່ຽງການຂະຫຍາຍ ຕົວທາງດ້ານເສດຖະກິດ, ຈັດຕັ້ງປະຕິບັດການຄົ້ນຄວ້າວິທະຍາສາດ ແລະ ສ້າງບົດລາຍງານໃນຂົງເຂດວຽກງານເສດຖະກິດມະຫາພາກ, ຂົງເຂດເສດຖະກິດອື່ນໆຮັບໃຊ້ການຜະລິດສະຖິຕິເສດຖະກິດ ແລະ ການຕິດຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ;
12. ສ້າງແຜນງານ ແລະ ຈັດຕັ້ງປະຕິບັດ ກອງປະຊຸມ, ການຝຶກອົບຮົມ ແລະ ສຳມະນາ ກັບກະຊວງຂະແໜງການ, ອົງການຈັດຕັ້ງທ້ອງຖິ່ນ ແລະ ພາກສ່ວນອື່ນໆເພື່ອແລກປ່ຽນ ສ້າງຄວາມອາດສາມາດທາງດ້ານສະຖິຕິເສດຖະກິດ;
13. ຈັດຕັ້ງປະຕິບັດແຜນງານການຮ່ວມມື ດ້ານວິຊາການກັບບັນດາອົງການຈັດຕັ້ງຕ່າງໆ ທັງຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຄວາມເຂັ້ມແຂງໃນການຜະລິດຕົວຊີ້ບອກສະຖິຕິເສດຖະກິດ;
14. ສ້າງຄວາມອາດສາມາດ ແລະ ໃຫ້ຄຳປຶກສາ ທາງວິຊາການດ້ານສະຖິຕິເສດຖະກິດ ໃຫ້ແກ່ອົງການຈັດຕັ້ງສະຖິຕິແຫ່ງຊາດ; ສ້າງຄວາມເຂັ້ມແຂງໃນການຜະລິດລວມຍອດຜະລິດຕະພັນພາຍໃນ, ສະຖິຕິລາຄາ ແລະ ເງິນເຟີ້ ແລະ ຕົວຊີ້ບອກເສດຖະກິດອື່ນໆໃນຂັ້ນທ້ອງຖິ່ນ;
15. ຄຸ້ມຄອງ, ກໍ່ສ້າງພະນັກງານ-ລັດຖະກອນ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງກົມ;
16. ຄຸ້ມຄອງ, ນຳໃຊ້ງົບປະມານ ແລະ ຊັບສິນຂອງລັດ ເພື່ອຮັບໃຊ້ການປະຕິບັດໜ້າທີ່ວຽກງານ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງກົມ;
17. ປະຕິບັດລະບອບສ່ອງແສງ ແລະສະຫຼຸບລາຍງານການຈັດຕັ້ງປະຕິບັດວຽກງານຂອງກົມ ປະຈຳອາທິດ, ປະຈຳເດືອນ, ປະຈຳໄຕມາດ, ປະຈຳ 6 ເດືອນ ແລະ ປະຈຳປີ ຢ່າງເປັນປົກກະຕິ;
18. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງຂັ້ນເທິງ.

ມາດຕາ 4. ຂອບເຂດສິດ

1. ນຳສະເໜີຫົວໜ້າສູນສະຖິຕິແຫ່ງຊາດ ເພື່ອອອກຄຳສັ່ງ, ຄຳແນະນຳ, ຂໍ້ຕົກລົງ, ແລະ ແຈ້ງການກ່ຽວກັບ ການຈັດຕັ້ງ ແລະ ການເຄື່ອນໄຫວ ວຽກງານ ຂອງກົມຮັບຜິດຊອບ;
2. ນຳສະເໜີ ຫົວໜ້າສູນສະຖິຕິແຫ່ງຊາດ ກ່ຽວກັບ ການລະດົມແຫຼ່ງທຶນ ແລະ ວຽກງານຮ່ວມມືກັບຕ່າງປະເທດ ດ້ານສະຖິຕິ;
3. ນຳພາ, ຊີ້ນຳ ແລະ ຄຸ້ມຄອງໃນການຈັດຕັ້ງວຽກງານການເກັບກຳ, ສັງລວມ, ລາຍງານຂໍ້ມູນ, ປຸງແຕ່ງ, ຄົ້ນຄວ້າ-ວິໄຈ ແລະ ລາຍງານຂໍ້ມູນສະຖິຕິເສດຖະກິດ;
4. ໃຫ້ຄຳປຶກສາທາງດ້ານວິຊາການສະຖິຕິເສດຖະກິດ ໃຫ້ແກ່ລະບົບການຈັດຕັ້ງສະຖິຕິແຫ່ງຊາດ ແລະ ພາກສ່ວນອື່ນໆ;
5. ເຂົ້າເຖິງ, ທວງເອົາຂໍ້ມູນ ແລະ ຖານຂໍ້ມູນ ຈາກທຸກພາກສ່ວນທັງພາກລັດ ແລະ ເອກະຊົນ ທີ່ກ່ຽວຂ້ອງກັບວຽກງານສະຖິຕິເສດຖະກິດ;

6. ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດ ການຜະລິດ, ການລາຍງານ ແລະ ການເຜີຍແຜ່ສະຖິຕິເສດຖະກິດ ໃຫ້ຖືກຕ້ອງຕາມລະບອບວິທີ ແລະ ວິທະຍາສາດສະຖິຕິ ທີ່ການຈັດຕັ້ງສະຖິຕິແຫ່ງຊາດວາງອອກໃນແຕ່ລະໄລຍະ;
7. ແຕ່ງຕັ້ງ ແລະ ອອກຂໍ້ຕົກລົງຄະນະວິຊາການຊ່ວຍວຽກ ແລະ ການຈັດແບ່ງຄວາມຮັບຜິດຊອບຂອງພະນັກງານພາຍໃຕ້ຄວາມຮັບຜິດຊອບຂອງກົມ;
8. ອອກໜັງສືເຊີນ, ແຈ້ງຕອບ, ແຈ້ງການ ຫາບັນດາກົມ, ຫ້ອງການ ໃນສູນສະຖິຕິແຫ່ງຊາດ ເພື່ອຈັດຕັ້ງປະຕິບັດກອງປະຊຸມ, ສຳມະນາ ແລະ ຝຶກອົບຮົມ ທີ່ກ່ຽວຂ້ອງກັບພາລະບົດບາດຂອງກົມ;
9. ນຳສະເໜີບຳລຸງກໍ່ສ້າງ, ສຶກສາອົບຮົມ, ຍົກລະດັບຄວາມຮູ້ ແລະ ຄວາມຊຳນານງານ ທາງດ້ານວິຊາສະເພາະ ແລະ ການຄຸ້ມຄອງບໍລິຫານຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ;
10. ຄຸ້ມຄອງ ແລະ ນຳໃຊ້ງົບປະມານ, ພາຫະນະ, ວັດຖຸອຸປະກອນຕາມການອະນຸມັດ ແລະ ມອບໝາຍຈາກສູນສະຖິຕິແຫ່ງຊາດ;
11. ເຊັນສັນຍາ, ເຊັນບົດບັນທຶກຄວາມເຂົ້າໃຈທີ່ກ່ຽວຂ້ອງກັບພາກສ່ວນຕ່າງໆ ຕາມການຕົກລົງເຫັນດີຂອງຂັ້ນເທິງ;
12. ປະຕິບັດສິດອື່ນໆ ຕາມການມອບໝາຍ ຂອງຂັ້ນເທິງ.

## ໝວດທີ 3
## ໂຄງປະກອບກົງຈັກການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກການຈັດຕັ້ງ ຂອງກົມສະຖິຕິເສດຖະກິດ ປະກອບມີ 3 ພະແນກຄື:

1. ພະແນກ ການບັນຊີແຫ່ງຊາດ;
2. ພະແນກ ສະຖິຕິຂະແໜງການ ແລະ ລາຄາ;
3. ພະແນກ ຄົ້ນຄວ້າ ແລະ ພັດທະນາ.

### ມາດຕາ 6 ໂຄງປະກອບບຸກຄະລະກອນ

ບຸກຄະລາກອນ ຂອງ ກົມສະຖິຕິເສດຖະກິດ ປະກອບມີ:

1. ຫົວໜ້າກົມ 1 ທ່ານ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງໂດຍນາຍົກລັດຖະມົນຕີ ຕາມກົດໝາຍ ແລະ ລະບຽບການ, ມີຄວາມຮັບຜິດຊອບຕໍ່ ຫົວໜ້າສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຕ່າງໆໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;
2. ຮອງຫົວໜ້າກົມຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງໂດຍ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ຕາມກົດໝາຍ ແລະ ລະບຽບການ, ຊ່ວຍຫົວໜ້າກົມ ໃນການຊີ້ນຳວຽກງານ ແລະ ລົງເລິກຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງຫົວໜ້າກົມ,

ມີຄວາມຮັບຜິດຊອບຕໍ່ກັບຫົວໜ້າກົມ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຕ່າງໆໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້; ໃນເວລາຫົວໜ້າກົມບໍ່ຢູ່, ຮອງຫົວໜ້າກົມຮັກສາການແທນຕາມການມອບໝາຍ ຢ່າງເປັນລາຍລັກອັກສອນ;

3. ຫົວໜ້າພະແນກ, ຮອງຫົວໜ້າພະແນກຈຳນວນໜຶ່ງ ຊຶ່ງໄດ້ຮັບການແຕ່ງຕັ້ງ, ຍົກຍ້າຍ ຫລື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ຕາມກົດໝາຍ ແລະ ລະບຽບການ ແລະ ລັດຖະກອນວິຊາການຈຳນວນໜຶ່ງ ຕາມການກຳນົດຕຳແໜ່ງງານ, ມີຄວາມຮັບຜິດຊອບຕໍ່ກັບຫົວໜ້າກົມ ກ່ຽວກັບຜົນສຳເລັດ ແລະ ຂໍ້ບົກຜ່ອງຕ່າງໆ ໃນຂົງເຂດວຽກງານທີ່ຕົນຮັບຜິດຊອບ.

## ໝວດທີ 4
## ໜ້າທີ່ຂອງແຕ່ລະພະແນກ

**ມາດຕາ 7 ໜ້າທີ່ ຂອງ ພະແນກການບັນຊີແຫ່ງຊາດ**

1. ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍ, ດຳລັດ, ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດ, ມະຕິ, ຄຳສັ່ງ, ຂໍ້ຕົກລົງ ຂອງກະຊວງແຜນການ ແລະ ການລົງທຶນ, ຂອງສູນສະຖິຕິແຫ່ງຊາດ ແລະ ແຜນດຳເນີນງານ ກົມສະຖິຕິເສດຖະກິດ ທີ່ວາງອອກໃນແຕ່ລະໄລຍະຕາມພະລາບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ;
2. ສ້າງນິຕິກຳ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານການຜະລິດ, ການເຜີຍແຜ່, ລາຍງານຂໍ້ມູນສະຖິຕິ ແລະ ຕົວຊີ້ບອກການບັນຊີແຫ່ງຊາດ;
3. ສ້າງ ແລະ ພັດທະນາ ເຄື່ອງມື, ຄູ່ມື, ລະບອບວິທີການເກັບກຳ, ສັງລວມ, ຄິດໄລ່, ລະບົບລະຫັດສາລະບານ, ຖານຂໍ້ມູນ ເພື່ອຜະລິດຕົວຊີ້ບອກ ແລະ ຂໍ້ມູນສະຖິຕິການບັນຊີແຫ່ງຊາດໄປຕາມຫຼັກການສາກົນ;
4. ອອກແບບ ແລະ ກຳນົດຄວາມຕ້ອງການໃນການຈັດຕັ້ງປະຕິບັດການສຳຫຼວດທີ່ຈຳເປັນໃນການຕີລາຄາສະພາບເສດຖະກິດ ແລະ ການເກັບກຳຂໍ້ມູນທາງດ້ານວຽກງານສະຖິຕິເສດຖະກິດ;
5. ສັງລວມ, ຄົ້ນຄວ້າ ແລະ ວິໄຈຂໍ້ມູນ ສະຖິຕິການບັນຊີແຫ່ງຊາດ, ລວມຍອດຜະລິດຕະພັນພາຍໃນ, ລວມຍອດລາຍໄດ້ແຫ່ງຊາດ, ດັດຊະນີການຜະລິດ ແລະ ຕົວຊີ້ບອກອື່ນໆ ຂອງສະຖິຕິການບັນຊີແຫ່ງຊາດ;
6. ເກັບກຳ, ສັງລວມ, ຄິດໄລ່ ແລະ ລາຍງານຂໍ້ມູນດ້ານສະຖິຕິການບັນຊີແຫ່ງຊາດ ຈາກລະບົບການລາຍງານບໍລິຫານຂອງບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ລວມທັງລະບົບການຈົດທະບຽນ, ການສຳຫຼວດໃຫຍ່, ການສຳຫຼວດຕົວແທນ ແລະ ການສຳຫຼວດສະເພາະອື່ນໆ ໃນແຕ່ລະໄລຍະ
7. ສ້າງສຳນວນ-ສຳເນົາ ຂໍ້ມູນຂອງລະບົບລາຍງານບໍລິຫານ,ການສຳຫຼວດໃຫຍ່, ສຳຫຼວດຕົວແທນ, ສຳຫຼວດສະເພາະ ແລະ ຕົວຊີ້ບອກດ້ານການບັນຊີແຫ່ງຊາດ ແລະ ສະຖິຕິເສດຖະກິດອື່ນໆທີ່ກ່ຽວຂ້ອງຕາມຫລັກການວິທີວິທະຍາສະຖິຕິ;
8. ປະສານສົມທົບ, ເກັບກຳສັງລວມຂໍ້ມູນ, ສ້າງ ແລະ ເຊື່ອມໂຍງລະບົບຖານຂໍ້ມູນສະຖິຕິຂະແໜງການ ແລະ ທ້ອງຖິ່ນ ຈາກການລາຍງານ, ລະບົບທະບຽນ ແລະ ການສຳຫຼວດ;

9. ຈັດຕັ້ງປະຕິບັດການຕິດຕາມປະເມີນ ແລະ ຄາດຄະເນທ່າອ່ຽງການຂະຫຍາຍ ຕົວທາງດ້ານເສດຖະກິດ, ຈັດຕັ້ງປະຕິບັດການຄົ້ນຄວ້າວິທະຍາສາດ ແລະ ສ້າງບົດລາຍງານໃນຂົງເຂດວຽກງານເສດຖະກິດມະຫາພາກ ແລະ ຂົງເຂດເສດຖະກິດອື່ນໆຮັບໃຊ້ການຜະລິດສະຖິຕິເສດຖະກິດ ແລະ ການຕິດຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໃນແຕ່ລະໄລຍະ;
10. ສ້າງແຜນງານ ແລະ ຈັດຕັ້ງປະຕິບັດ ກອງປະຊຸມ, ການຝຶກອົບຮົມ ແລະ ສຳມະນາ ກ່ຽວກັບສະຖິຕິການບັນຊີແຫ່ງຊາດ ໃຫ້ແກ່ກະຊວງຂະແໜງການ, ອົງການຈັດຕັ້ງທ້ອງຖິ່ນ ແລະ ພາກສ່ວນອື່ນໆ;
11. ຈັດຕັ້ງປະຕິບັດແຜນງານການຮ່ວມມື ດ້ານວິຊາການກັບບັນດາອົງການຈັດຕັ້ງຕ່າງໆ ທັງຢູ່ພາຍໃນ ແລະ ຕ່າງປະເທດ ເພື່ອສ້າງຄວາມເຂັ້ມແຂງໃນການຜະລິດຕົວຊີ້ບອກ ແລະ ການບັນຊີແຫ່ງຊາດ;
12. ຕິດຕາມ, ກວດກາ ແລະ ຊຸກຍູ້ ການເກັບກຳ ແລະ ຜະລິດສະຖິຕິການບັນຊີແຫ່ງຊາດ ແລະ ດ້ານເສດຖະກິດອື່ນໆທີ່ກ່ຽວຂ້ອງ ໃນລະດັບຊາດ, ຂະແໜງການ ແລະ ທ້ອງຖິ່ນ; ສ້າງຄວາມເຂັ້ມແຂງໃນການຜະລິດລວມຍອດຜະລິດຕະພັນພາຍໃນ ແລະ ຕົວຊີ້ບອກເສດຖະກິດອື່ນໆໃນຂັ້ນທ້ອງຖິ່ນ;
13. ສະຫຼຸບລາຍງານແຜນການເຄື່ອນໄຫວ ປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ ເພື່ອລາຍງານຕໍ່ຄະນະກົມ;
14. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຄະນະກົມ ແລະ ຂັ້ນເທິງ.

### ມາດຕາ 8 ພະແນກສະຖິຕິ ຂະແໜງການ ແລະ ລາຄາ

1. ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍ, ມະຕິສະພາແຫ່ງຊາດ, ລັດຖະບັນຍັດ ແລະ ລັດຖະດຳລັດຂອງປະທານປະເທດ, ມະຕິກົກລົງຂອງລັດຖະບານ, ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ ແລະ ລະບຽບການຂອງລັດ, ແຜນການ, ແຜນດຳເນີນງານ ແລະ ໂຄງການລະອຽດ ດ້ານສະຖິຕິເສດຖະກິດໃນແຕ່ລະໄລຍະ;
2. ຄົ້ນຄວ້າ, ສ້າງນິຕິກຳ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານການຜະລິດ, ການເຜີຍແຜ່ ແລະ ລາຍງານຂໍ້ມູນສະຖິຕິຂະແໜງການ ແລະ ລາຄາ;
3. ສ້າງແຜນງານ ແລະ ຈັດຕັ້ງປະຕິບັດ ກິດຈະກຳກ່ຽວກັບການຜະລິດຂໍ້ມູນສະຖິຕິຂະແໜງການເສດຖະກິດ ແລະ ສະຖິຕິລາຄາ ແລະ ເປັນໃຈກາງໃນການຈັດຕັ້ງປະຕິບັດ ການສຳຫລວດຕົວແທນ, ການສຳຫຼວດສະເພາະ ແລະ ການສຳຫຼວດໃຫຍ່ອື່ນໆ ທີ່ກ່ຽວຂ້ອງ;
4. ພັດທະນາ ແລະ ກຳນົດຕົວຊີ້ບອກທາງດ້ານ ເສດຖະກິດ ໃນລະດັບຊາດ, ຂະແໜງການ ແລະ ທ້ອງຖິ່ນ ພ້ອມທັງສ້າງສຳນວນ ແລະ ສຳເນົາ ຂໍ້ມູນສະຖິຕິດັ່ງກ່າວ ໃນແຕ່ລະໄລຍະ;
5. ສ້າງ ແລະ ພັດທະນາ ເຄື່ອງມື, ຄູ່ມື, ລະບອບວິທີການເກັບກຳ, ສັງລວມ, ຄິດໄລ່, ລະບົບລະຫັດສາລະບານ, ຖານຂໍ້ມູນ ເພື່ອຜະລິດຕົວຊີ້ບອກ ແລະ ຂໍ້ມູນສະຖິຕິຂະແໜງການ, ລາຄາ ແລະ ສະຖິຕິເສດຖະກິດອື່ນໆທີ່ກ່ຽວຂ້ອງໄປຕາມຫຼັກການສາກົນ;
6. ອອກແບບການສຳຫຼວດ ແລະ ການເກັບກຳຂໍ້ມູນ ວຽກງານສະຖິຕິຂະແໜງເສດຖະກິດ ແລະ ລາຄາ;
7. ສ້າງສຳນວນ-ສຳເນົາ ແລະ ສັງລວມ ຂໍ້ມູນຂອງລະບົບລາຍງານບໍລິຫານ, ການສຳຫຼວດໃຫຍ່, ການສຳຫຼວດຕົວແທນ, ການສຳຫຼວດສະເພາະ ແລະ ຕົວຊີ້ບອກດ້ານສະຖິຕິຂະແໜງການ, ລາຄາ ແລະ ສະຖິຕິເສດຖະກິດອື່ນໆທີ່ກ່ຽວຂ້ອງ;

8. ສັງລວມ, ຄົ້ນຄວ້າ ແລະ ວິໄຈຂໍ້ມູນ ສະຖິຕິລາຄາ, ດັດຊະນີລາຄາ ແລະ ອັດຕາເງິນເຟີ້, ດັດຊະນີການນຳເຂົ້າ-ສົ່ງອອກ, ດັດຊະນີການລົງທຶນ, ແລະ ຕົວຊີ້ບອກສະຖິຕິດ້ານເສດຖະກິດອື່ນໆ;
9. ປະສານສົມທົບ, ເກັບກຳສັງລວມຂໍ້ມູນ, ສ້າງ ແລະ ເຊື່ອມໂຍງລະບົບຖານຂໍ້ມູນສະຖິຕິຂະແໜງການຄ້າ, ການລົງທຶນ, ສະຖິຕິລາຄາ ແລະ ສະຖິຕິອື່ນໆ ຈາກການລາຍງານ, ລະບົບທະບຽນ ແລະ ການສຳຫຼວດ;
10. ຈັດຕັ້ງປະຕິບັດ ການຕິດຕາມປະເມີນ ແລະ ຄາດຄະເນທ່າອ່ຽງການຂະຫຍາຍຕົວທາງດ້ານເສດຖະກິດ, ຈັດຕັ້ງປະຕິບັດການຄົ້ນຄວ້າ ແລະ ສ້າງບົດລາຍງານວິທະຍາ ສາດໃນຂົງເຂດວຽກງານເສດຖະກິດຂະແໜງການ ແລະ ລາຄາ ແລະ ຂົງເຂດເສດຖະກິດອື່ນໆ;
11. ສ້າງແຜນງານ ແລະ ຈັດຕັ້ງປະຕິບັດ ກອງປະຊຸມ, ການຝຶກອົບຮົມ ແລະ ສຳມະນາ ກັບກະຊວງຂະແໜງການ, ອົງການຈັດຕັ້ງທ້ອງຖິ່ນ ແລະ ພາກສ່ວນອື່ນໆ;
12. ຕິດຕາມ, ກວດກາ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດການເກັບກຳ ແລະ ຜະລິດສະຖິຕິເສດຖະກິດ ໃນລະດັບຊາດ, ຂະແໜງການ ແລະ ທ້ອງຖິ່ນ. ສ້າງຄວາມເຂັ້ມແຂງໃນການຜະລິດ ສະຖິຕິລາຄາ ແລະເງິນເຟີ້ຂແລະ ຕົວຊີ້ບອກເສດຖະກິດຂະແໜງການອື່ນໆໃນຂັ້ນທ້ອງຖິ່ນ;
13. ສະຫຼຸບລາຍງານແຜນການເຄື່ອນໄຫວ ປະຈຳອາທິດ, ປະຈຳເດືອນ, 3 ເດືອນ, 6 ເດືອນ ແລະ ປະຈຳປີ ເພື່ອລາຍງານຕໍ່ຄະນະກົມ;
14. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຄະນະກົມ ແລະ ຂັ້ນເທິງ.

## ມາດຕາ 9 ໜ້າທີ່ ຂອງ ພະແນກ ຄົ້ນຄວ້າ ແລະ ພັດທະນາ

1. ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍ, ມະຕິສະພາແຫ່ງຊາດ, ລັດຖະບັນຍັດ ແລະ ລັດຖະດຳລັດຂອງປະທານປະເທດ, ມະຕິຕົກລົງຂອງລັດຖະບານ, ຍຸດທະສາດພັດທະນາລະບົບສະຖິຕິແຫ່ງຊາດແບບຍືນຍົງ  ແລະ ລະບຽບການຂອງລັດ, ແຜນການ, ແຜນດຳເນີນງານ ແລະ ໂຄງການລະອຽດ ດ້ານສະຖິຕິເສດຖະກິດໃນແຕ່ລະໄລຍະ;
2. ຄົ້ນຄວ້າ, ສ້າງນິຕິກຳ ແລະ ລະບຽບການ ທີ່ກ່ຽວຂ້ອງກັບວຽກງານການຜະລິດ, ການເຜີຍແຜ່ ແລະ ລາຍງານຂໍ້ມູນສະຖິຕິທາງການດ້ານເສດຖະກິດ;
3. ສ້າງແຜນງານ ແລະ ຈັດຕັ້ງປະຕິບັດ ກິດຈະກຳກ່ຽວກັບກັບການຜະລິດຂໍ້ມູນສະຖິຕິເສດຖະກິດທະບຽນທຸລະກິດ, ຫົວໜ່ວຍພື້ນຖານເສດຖະກິດ ແລະ ເປັນໃຈກາງໃນການຈັດຕັ້ງປະຕິບັດການສຳຫລວດໃຫ່ຍ, ການສຳຫລວດຕົວແທນ ແລະ ສຳຫຼວດສະເພາະອື່ນໆທີ່ກ່ຽວຂ້ອງ;
4. ອອກແບບການສຳຫຼວດ ແລະ ການເກັບກຳຂໍ້ມູນທາງດ້ານ ສະຖິຕິເສດຖະກິດ ແລະ ຫົວໜ່ວຍພື້ນຖານເສດຖະກິດ;
5. ສ້າງ ແລະ ພັດທະນາ ເຄື່ອງມື, ຄູ່ມື, ລະບອບວິທີການເກັບກຳ, ສັງລວມ, ຄິດໄລ່, ລະບົບລະຫັດສາລະບານ, ຖານຂໍ້ມູນ ເພື່ອຜະລິດຕົວຊີ້ບອກ ແລະ ຂໍ້ມູນສະຖິຕິທະບຽນ ແລະ ສະຖິຕິເສດຖະກິດອື່ນໆທີ່ກ່ຽວຂ້ອງໄປຕາມຫຼັກການສາກົນ;
6. ສ້າງສຳນວນ-ສຳເນົາ ຂໍ້ມູນຂອງລະບົບລາຍງານບໍລິຫານ, ການສຳຫຼວດໃຫຍ່, ການສຳຫຼວດຕົວແທນ, ການສຳຫຼວດສະເພາະ ແລະ ຕົວຊີ້ບອກດ້ານສະຖິຕິທະບຽນ ຕາມຫລັກການວິທີວິທະຍາສະຖິຕິ;

7. ປະສານສົມທົບ, ເກັບກໍາສັງລວມຂໍ້ມູນ, ສ້າງ ແລະ ເຊື່ອມໂຍງລະບົບຖານຂໍ້ມູນສະຖິຕິທະບຽນທຸລະກິດ ແລະ ບັນຊີຫົວໜ່ວຍພື້ນຖານເສດຖະກິດໃນຂະແໜງການ ແລະ ທ້ອງຖິ່ນ ຈາກການລາຍງານ, ລະບົບທະບຽນ ແລະ ການສໍາຫຼວດ ເພື່ອຜະລິດຕົວຊີ້ບອກ ທີ່ກ່ຽວຂ້ອງ;
8. ສ້າງແຜນງານ ແລະ ຈັດຕັ້ງປະຕິບັດ ກອງປະຊຸມ, ການຝຶກອົບຮົມ ແລະ ສໍາມະນາ ກັບກະຊວງຂະແໜງການ, ອົງການຈັດຕັ້ງທ້ອງຖິ່ນ ແລະ ພາກສ່ວນອື່ນໆເພື່ອແລກປ່ຽນ ສ້າງຄວາມອາດສາມາດທາງດ້ານສະຖິຕິທະບຽນ ແລະ ຫົວໜ່ວຍພື້ນຖານເສດຖະກິດ;
9. ຄຸ້ມຄອງ, ກໍ່ສ້າງພະນັກງານ-ລັດຖະກອນ ແລະ ນໍາສະເໜີການຊັບຊ້ອນ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບ ຜິດຊອບຂອງກົມ;
10. ຄຸ້ມຄອງ, ນໍາໃຊ້ງົບປະມານ ແລະ ຊັບສິນ ຂອງລັດ ເພື່ອຮັບໃຊ້ການປະຕິບັດໜ້າທີ່ວຽກງານ ຕາມພາລະບົດບາດ ແລະ ຂອບເຂດຄວາມຮັບຜິດຊອບຂອງກົມ;
11. ສະຫຼຸບລາຍງານແຜນການເຄື່ອນໄຫວ ປະຈໍາອາທິດ, ປະຈໍາເດືອນ, 3 ເດືອນ, 6 ເດືອນ ແລະ ປະຈໍາປີ ເພື່ອລາຍງານຕໍ່ຄະນະກົມ;
12. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຂອງຄະນະກົມ ແລະ ຂັ້ນເທິງ.

## ໝວດທີ 5
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

### ມາດຕາ 10 ຫຼັກການ

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕີກລົງເປັນໝູ່ຄະນະ ສົມທົບກັບ ການປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ແລະເສີມຂະຫຍາຍຫົວຄິດປະດິດສ້າງຂອງພະນັກງານ-ລັດຖະກອນທຸກລະດັບ, ການມອບສິດ ແລະຄວາມຮັບຜິດຊອບຕ້ອງມີລາຍລັກອັກສອນເປັນທາງການ;
2. ທຸກການເຄື່ອນໄຫວວຽກງານແມ່ນອີງໃສ່ແນວທາງຂອງພັກ, ລະບຽບກົດໝາຍຂອງລັດ, ຫຼັກການລວມຂອງລັດຖະບານ, ນໍາເອົາແນວທາງນະໂຍບາຍຂອງພັກ-ລັດຖະບານ, ແຜນການປະຈໍາປີ, ແຜນ 5 ປີ ຂອງສູນສະຖິຕິແຫ່ງຊາດ ແລະຈັດຕັ້ງຜັນປະຕິບັດໃຫ້ໄດ້ຮັບຜົນດີ.

### ມາດຕາ 11 ແບບແຜນວິທີເຮັດວຽກ

ກົມສະຖິຕິເສດຖະກິດ ເຄື່ອນໄຫວ ແລະ ດໍາເນີນງານຕາມຫຼັກການ ດັ່ງນີ້:

1. ເຮັດວຽກມີແຜນການ, ແຜນງານ, ໂຄງການລະອຽດ ມີກໍານົດເວລາ; ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບອົງການທີ່ກ່ຽວຂ້ອງ ແລະ ເປັນເອກະພາບກັນ;

2. ເຮັດວຽກມີການກວດກາ, ຕິດຕາມຊຸກຍູ້, ສະຫລຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຜົນເສຍ, ພ້ອມທັງປະຕິບັດລະບອບລາຍງານສ່ອງແສງຢ່າງເຂັ້ມງວດ;

3. ປະຕິບັດລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ ຫຼື ປະຈຳປີ ແລະ ປະຕິບັດລະບອບລາຍງານໃຫ້ຂັ້ນເທິງຕົນ ແລະ ລັດຖະບານ ເປັນປົກກະຕິ ໂດຍຜ່ານສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 12 ງົບປະມານ ແລະ ຕາປະທັບ**

ກົມສະຖິຕິເສດຖະກິດ ມີ ງົບປະມານ ແລະ ກາປະທັບ ເພື່ອຮັບໃຊ້ການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 13 ການຈັດຕັ້ງປະຕິບັດ**

ກົມສະຖິຕິເສດຖະກິດ, ຫ້ອງການ, ບັນດາກົມ ສູນສະຖິຕິແຫ່ງຊາດ, ກະຊວງ ແຜນ ການ ແລະ ການລົງທຶນ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 14 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມສະຖິຕິເສດຖະກິດ ສູນສະຖິຕິແຫ່ງຊາດ ສະບັບເລກທີ 0706/ຜທ, ລົງວັນທີ14/03/2012 ແລະມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ຄຳເຈນ ວົງໂພສີ